# ມາຣະໂກ ຂ່າວປະເສີດຂອງຜູ້ບົວຣະບັດ

ໃຈຄວາມສຳຄັນ ການບົວຣະບັດ ບົດ ໑໐:໔໕

ຈຳນວນບົດ ໑໖ ບົດ

## ວ່າດ້ວຍຜູ້ແຕ່ງ

ທ່ານມາຣະໂກຜູ້ນີ້ຊື່ອີກວ່າ "ໂຢຮັນ" ເປັນບຸດຂອງນາງມາຣີ ຊາວກຸງເຢຣູຊາເລັມ (ກິຈການ ໑໒:໑໒) ເປັນພີ່ນ້ອງກັບທ່ານບານາບາ (ໂກໂລດ ໔:໑໐) ເມື່ອເພິ່ນເດີນທາງໄປປ່າວປະກາດໃນຄັ້ງທີໜຶ່ງ ເພິ່ນໄດ້ໄປກັບທ່ານໂປໂລແລະທ່ານບານາບາ ແຕ່ທ່ານມາຣະໂກບໍ່ໄດ້ໄປເຖິງທີ່ສຸດ (ກິຈການ ໑໓:໕,໑໓) ໃນຕອນຫລັງທ່ານບານາບາໄດ້ເອົາທ່ານມາຣະໂກໄປນຳ ແຕ່ທ່ານໂປໂລບໍ່ເຫັນດີຈະເອົາເພິ່ນໄປນຳອີກ (ກິຈການ ໑໕:໓໙, ໒ ຕີໂມເຕ ໔:໑໑)

ທ່ານ ເປ ໂຕ ໄດ້ ເອີ້ນ ທ່ານ ມາຣະໂກ ເປັນ ລູກ ຂອງ ຄວາມ ເຊື່ອ (໑ ເປໂຕ ໕:໑໓) ຕາມເຣື່ອງຂອງພວກຄຣິສຕະຈັກຄາວກ່ອນເຂົ້າໃຈວ່າ ທ່ານມາຣະໂກໄດ້ຢູ່ນຳທ່ານເປໂຕ ຈຶ່ງເຂົ້າໃຈເຣື່ອງຂອງພຣະເຢຊູຢ່າງຄັກແນ່ ພວກຮຽນຮູ້ພຣະຄັມພີສ່ວນຫລາຍຄິດວ່າ ຊາຍໜຸ່ມທີ່ຢູ່ນຳພຣະເຢຊູໃນສວນເຄັດເຊມາເນແລ້ວໄດ້ປົບໜີໂຕເປົ່າ ຄົງຈະແມ່ນທ່ານມາຣະໂກນີ້ເອງ ເພາະວ່າເພິ່ນເອງໄດ້ຈົດເຫດການນີ້ໄວ້ ໑໔:໕໑–໕໒

## ຜູ້ຮັບໜັງສືນີ້

ທ່ານມາຣະໂກໄດ້ແຕ່ງໜັງສືນີ້ສຳລັບຄົນຕ່າງປະເທດ ລັ້ນຈຶ່ງບໍ່ໄດ້ອ້າງເອົາຄຳທຳນວາຍ ແລະ ຂໍ້ພຣະບັນຍັດຂອງພວກຢູດາໃນ ພຣະຄຳພີເດີມເທົ່າໃດພັກ ອີກປະການນຶ່ງເພິ່ນໄດ້ແກ້ໄຂພາສາແລະຣີດຄອງຂອງພວກຢູດາໃຫ້ດີ ເພາະຢ້ານຜູ້ອ່ານຊຶ່ງບໍ່ແມ່ນຄົນອິສຣາເອັນເຂົ້າໃຈໃນສິ່ງເລົ່ານີ້ (໓:໑໗; ໕:໔໑; ໗:໑໑; ໑໔:໓໖) ຕາມໜັງສືປວັດກ່າວວ່າ ທ່ານມາຣະໂກໄດ້ແຕ່ງໜັງສືນີ້ສຳລັບຊາວກຸງໂຣມ

## ວ່າດ້ວຍເວລາຂຽນໜັງສືນີ້

ພວກນັກປາດແລະສາສນາຈານພຣະຄຳພີເຂົ້າໃຈກັນວ່າ ທ່ານມາຣະໂກໄດ້ແຕ່ງໜັງສືນີ້ຂຶ້ນກ່ອນໝູ່ ຄືຣະຫວ່າງປີ ໔໐–໖໐ ທີ່ກຸງໂຣມ

ຕາມຣາກຖານຄວາມເປັນພະຍານ ຂອງຫົວໜ້າຄຣິສຕະຈັກຄົນນຶ່ງຊື່ "ປາເປັຍ" Papias ພວກເຮົາເຂົ້າໃຈວ່າ ທ່ານມາຣະໂກໄດ້ຮຽນຮູ້ເຖິງເຣື່ອງພຣະເຢຊູຈາກທ່ານເປໂຕ ແລະໄດ້ແຕ່ງໜັງສືນີ້ກໍເໝາະສົມກັບຄວາມຄິດ ຄວາມຮູ້ແລະນິໄສໃຈຄໍຂອງທ່ານເປໂຕອັຄສາວົກຜູ້ຕິດຕາມພຣະເຢຊູຢູ່ຣະຫວ່າງສາມປີປາຍ

## ວ່າດ້ວຍສພາບ ຂອງພຣະເຢຊູ

໑. ໃນໜັງສືນີ້ ທ່ານມາຣະໂກໄດ້ສະແດງວ່າ ພຣະເຢຊູເປັນພຣະບຸດຂອງພຣະເຈົ້າ (໑:໑) ແຕ່ໄດ້ປະຖິ້ມພຣະກຽດແລະພຣະຣັສມີຂອງພຣະອົງເລີຍ ເມື່ອໄດ້ສະແດງຕົນເປັນຂ້າ

ໃຊ້ຜູ້ດີທີ່ສຸດ ໑໐:໔໕ ບຸດມະນຸດ . . ໄດ້ມາເພື່ອຮັບໃຊ້
ມະນຸດ ບົດ ໑–໑໐
ແລະ ເພື່ອຖວາຍຊີວິດຂອງຕົນເປັນຄ່າໄຖ່ຂອງຄົນທັງຫລາຍ
ບົດ ໑໑–໑໖

໒. ຂ່າວປະເສີດຕາມທ່ານມາຣະໂກນີ້ໄດ້ອະທິບາຍເນື້ອຄວາມ ໃນໜັງສືຟີລິບບົດ ໒:໔–໘ ກັບທັງເນື້ອຄວາມໃນໜັງສື ເອຊາອີ ໔໒:໑ ແມ່ນເຣື່ອງຂອງພຣະເຢຊູຊົງຮັບໃຊ້

໓. ໃນໜັງສືນີ້ບໍ່ໄດ້ເລົ່າເຣື່ອງປະສູດຂອງພຣະເຢຊູເລີຍ ຄືເນື້ອ ເຣີ່ມຂຽນໜ້າຕົ້ນກໍເວົ້າເຖິງຜູ້ຮັບໃຊ້ໂລດ ແລະເຣື່ອງເຊື້ອ ວົງກໍບໍ່ມີຢູ່ໃນໜັງສືນີ້ເໝືອນກັນ ດ້ວຍວ່າຜູ້ຮັບໃຊ້ນັ້ນບໍ່ຈຳ ເປັນຈະຕ້ອງສະແດງຕົນເອງ

໔. ອາການທີ່ສະແດງໃຫ້ເຫັນວ່າພຣະອົງເປັນຂ້າໃຊ້ດີ

–ໃນເວລາເຊົ້າກ່ອນພຣະອົງຈະຊົງທຳງານ ພຣະອົງໄດ້ ສະເດັດ ອອກ ໄປ ຍັງ ບ່ອນ ສງັດ ເພື່ອ ທຳ ການ ອ້ອນ ວອນ ໑:໓໕

–ເມື່ອ ຄົນ ທັງ ຫລາຍ ຢາກ ຍົກ ພຣະ ອົງ ຂຶ້ນ ເປັນ ກະ ສັດ ພຣະອົງຊົງໜີໄປອ້ອນວອນຢູ່ຕາມບ່ອນສງັດ ໑:໔໕

–ກ່ອນຈະຄັດເລືອກພວກອັຄສາວົກ ພຣະອົງໄດ້ສະເດັດ ຂຶ້ນໄປຍັງພູເຂົາ ເພື່ອອ້ອນວອນໃຫ້ພຣະເຈົ້າຊົງເລືອກ ຊ່ວຍ ໓:໑໓

–ເມື່ອພວກອັຄສາວົກ ກັບມາຈາກປ່າວປະກາດຂ່າວປະເສີດ ກໍຈຶ່ງນຳພວກເຂົາໄປຢູ່ຕາມບ່ອນສງັດ ໖:໓໐-໓໒

–ກ່ອນຈະມີພຣະຣັສມີປາກົດໃຫ້ເຫັນ ພຣະອົງໄດ້ສະເດັດໄປຍັງພູເຂົາ ພ້ອມດ້ວຍອັຄສາວົກສາມຄົນເພື່ອທຳການອ້ອນວອນຢູ່ຕ່າງຫາກ ໙:໒

–ພຣະອົງບໍ່ຊອບຢູ່ໃນເມືອງ ມັກສະເດັດໄປຢູ່ຕາມບ້ານນອກຫລືບ່ອນສງັດ ໑໑:໑໑

–ເມື່ອ ໄດ້ ຈຶ່ງ ຂັບ ໄລ່ ພວກຊື້ ຂາຍ ໃນ ວິ ຫານ ອອກ ແລ້ວ ພຣະອົງໄດ້ສະເດັດຈາກກຸງໄປ ໑໑:໑໙

–ເວລາພຣະອົງຢູ່ສວນເຄັດເຊມາເນ ໑໔:໓໒

–ສຸດທ້າຍ ພຣະອົງໄດ້ສະເດັດຂຶ້ນເມືອຟ້າສວັນ ຈຶ່ງປະທັບນັ່ງຢູ່ພຣະຫັດເບື້ອງຂວາຂອງພຣະເຈົ້າ ໑໖:໑໙

໔. ຍັງມີສິ່ງສຳຄັນອີກປະການນຶ່ງ ທີ່ເໝາະສົມກັບສພາບ ຂອງຜູ້ຮັບໃຊ້ ຄືວ່າໃນພົງສີນີ້ພວກເຮົາໄດ້ພົບຄຳວ່າ "ໃນບັດດຽວນັ້ນ" ຫລື "ໃນທັນທີນັ້ນ" ຢູ່ເລື້ອຍໆ ນີ້ກໍໝາຍຄວາມວ່າພຣະເຢຊູເປັນຜູ້ຮັບໃຊ້ທີ່ເອົາໃຈໃສ່ ແລະຍອມເສັຍເວລາໂດຍບໍ່ມີປະໂຍດ

## ວ່າດ້ວຍເນື້ອຄວາມ

ຂ່າວປະເສີດຕາມທ່ານມາຣະໂກນີ້ ໄດ້ ມີຢູ່ໃນພົງສີ ມັດທາຍ ແລະ

ໜັງສືລູກາເກືອບໝົດທຸກເຣື່ອງມີຢູ່ປະມານສີ່ຫລືຫ້າເຣື່ອງເທົ່ານັ້ນທີ່ຕ່າງກັບມີຢູ່ໃນໜັງສືອື່ນ ຄືໃນຈຳນວນ ໖໗໘ ຂໍ້ຂອງໜັງສືມາຣະໂກນັ້ນ ໄດ້ມີຢູ່ໃນໜັງສືອື່ນເຖິງ ໖໑໘ ຂໍ້

ທ່ານມາຣະໂກໄດ້ເລົ່າເຣື່ອງພຣະເຢຊູໄວ້ສັ້ນ ໆ ເພິ່ນບໍ່ໄດ້ເລົ່າໃຫ້ ຍືດຍາວເໝືອນມີຢູ່ໃນໜັງສື ມັດທາຍແຕ່ການອັສຈັນອັນສຳຄັນຕ່າງ ໆ ກໍໄດ້ເລົ່າໄວ້ເຖິງ ໑໘ ຄັ້ງ

໑. ຊົງບັງຄັບສິ່ງທີ່ເກີດຂຶ້ນໂດຍທັມະຊາດມີ ໕ ຄັ້ງ
- ຊົງບອກລົມໃຫ້ຢຸດ ບົດ ໔:໓໙–໔໐
- ຊົງລ້ຽງອາຫານຫ້າພັນຄົນ ບົດ ໖:໓໕–໔໔
- ຊົງລ້ຽງອາຫານສີ່ພັນຄົນ ບົດ ໘:໑–໙
- ເວລາສະເດັດໄປເທິງນ້ຳທະເລ ບົດ ໖:໔໗–໔໙
- ເວລາຕົ້ນໝາກເດື່ອເຫດ ຫ່ຽວແຫ້ງໄປ ບົດ ໑໑:໒໐

໒. ຊົງປິ່ນປົວຄົນໄຂ້ດ້ວຍໂຣກຕ່າງ ໆ ດ້ວຍຣິດອຳນາດມີ ໘ ຄັ້ງ
- ຊົງປິ່ນປົວຄົນໄຂ້ ບົດ ໑:໓໐–໓໑
- ຊົງປິ່ນປົວຄົນຂີ້ທູດ ບົດ ໑:໔໐–໔໑
- ຊົງປິ່ນປົວຄົນເປັນງ່ອຍ ບົດ ໒:໓–໑໒
- ຊົງປິ່ນປົວຄົນມືລີບ ບົດ ໓:໑–໕
- ເວລາຜູ້ຍິງດົມຍາດເລືອດຕົກ ບົດ ໕:໒໕–໓໐
- ຊົງປິ່ນປົວຄົນຫູໜວກແລະປາກກືກ ບົດ ໗:໓໒–໓໕

– ຊົງປິ່ນປົວບາຣະຕິເມຜູ້ຕາບອດ ບົດ ໑໐:໔໖–໕໒

໓. ຊົງບັງຄັບຜີຮ້າຍອອກມີດັ່ງນີ້

– ຄັ້ງຢູ່ເມືອງກາເປນາອູມ ບົດ ໑:໒໑–໒໘

– ຄັ້ງຜີຮ້າຍເຂົ້າຊາວຄາດາຣາ ບົດ ໕:໑–໒໐

– ຄັ້ງຜີຮ້າຍເຂົ້າຊາວຕ່າງປະເທດ ບົດ ໗:໒໔–໓໐

– ຄັ້ງຜີຮ້າຍເຂົ້າຄົນເປັນບ້າໝູ ບົດ ໙:໑໔–໒໙

໔. – ຊົງບັງຄັບຄວາມຕາຍມີຢູ່ດັ່ງນີ້

– ຄັ້ງລູກສາວຂອງຢາອິເລຄືນມາຈາກຕາຍ

ບົດ ໕:໓໕–໔໓

ເລື່ອງຕໍ່ໄປນີ້ໄດ້ມີຢູ່ແຕ່ໃນໜັງສືມາຣະໂກເທົ່ານັ້ນຄື

– ຄຳອຸປມາເລື່ອງກ້າທີ່ງອກຂຶ້ນງ່າຍ ບົດ ໔:໒໖–໒໙

– ຄົນຫູໜວກແລະປາກກືກ ບົດ ໗:໓໑–໓໗

– ຄົນຕາບອດທີ່ໄດ້ດີເທື່ອລະໜ້ອຍ ບົດ ໘:໒໒–໒໖

– ຄົນຕາບອດຊື່ວ່າບາຣະຕິເມ ບົດ ໑໐:໔໖–໕໒

– ຊາຍໜຸ່ມທີ່ປົບໜີໃນຄືນທີ່ພຣະອົງຖືກຈັບ

ບົດ ໑໔:໕໑–໕໒

– ພຣະເຢຊູຊົງເປັນຊ່າງໄມ້ ບົດ ໖:໓

ການແບ່ງເປັນພາກ

ພາກທີ ໑ ການຈັດຕຽມເປັນຜູ້ຮັບໃຊ້ ບົດ ໑:໑–໑໓

ກ. ການຮັບໃຊ້ຂອງໂຢຮັນບັບຕິໂຕ ບົດ ໑:໑-໘

ຂ. ຊົງຮັບສິນບັບເຕມາແລະຊົງຖືກ
ທົດລອງໃນປ່າ ບົດ ໑:໙-໑໓

ພາກທີ ໒ ການຮັບໃຊ້ພຣະເຈົ້າຂອງ
ພຣະເຢຊູ ບົດ ໑:໑໔-໑໓:໓໗

ກ. ທີ່ແຂວງຄາລີເລ ບົດ ໑:໑໔-໙:໕໐

ຂ. ເມື່ອສະເດັດໄປສູ່ກຸງເຢຣູຊາເລັມ ບົດ ໑໐

ຄ. ເມື່ອຊົງປະທັບຢູ່ກຸງເຢຣູຊາເລັມ ບົດ ໑໑-໑໓

ພາກທີ ໓ ຊົງຍອມຕາຍເທິງໄມ້ກາງແຂນ
(ຟີລິບ ໒:໓-໘) ບົດ ໑໔-໑໕

ພາກທີ ໔ ການຄືນມາຈາກຄວາມຕາຍ
ແລະການຂຶ້ນສູ່ຟ້າສວັນ ບົດ ໑໖